San Diego City Schools

**Fact Sheet** ລະດູໃບໄມ້ລົ່ນ 2005

# ການບໍລິການເດັກທີ່ພໍ່ແມ່ສົ່ງເຂົ້າໂຮງຮຽນເອກະຊົນ (PPPSS)

ການຊ່ວຍເຫລືອພວກນັກຮຽນທີ່ພໍ່ແມ່ສົ່ງເຂົ້າໂຮງຮຽນເອກະຊົນ (**PPPSS**) ເປັນການບໍລິການຊ່ວຍເຫລືອການສຶກສາພິເສດອັນນຶ່ງສຳຫລັບພວກນັກຮຽນເຂົ້າໃນໂຮງຮຽນເອກະຊົນ. ອີງຕາມກົດຫມາຍຣັຖບານຂອງຣັຖ ແລະ ຣັຖບານກາງນັ້ນ, ເຂດສຶກສາໂຮງຮຽນແຊນດີເອໂກໄດ້ມີນະໂຍບາຍຊ່ອຍໂຮງຮຽນເອກະຊົນເພື່ອໃຫ້ເດັກ-ນັກຈາກັນຕ່າງໆ, ຮັບເອົາເດັກທີ່ສົ່ງມາຈາກໂຮງຮຽນເອກະຊົນ ແລະ ແຫ່ງອື່ນໆ, ແລະ ທຳການສອບເສັງທີ່ເຫມາະສົມສຳຫລັບພວກນັກຮຽນທີ່ສົງໃສວ່າພິການ.

ຖ້າຄະນະໂຄງການສຶກສາສ່ວນບຸກຄົນ (**IEP**) ກຳນົດວ່ານັກຮຽນຜູ້ນັ້ນພິການ ແລະ ມີເງື່ອນໄຂໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງຕ່າງໆນັ້ນ, ການສຶກສາສ່ວນບຸກຄົນ (**IEP**) ຈະຕ້ອງໄດ້ຈັດໃຫ້ມີຂຶ້ນ.

ຖ້າພໍ່ແມ່ປະຕິເສດບໍ່ຮັບການບໍລິການຟຣີຈາກສູນກາງສຶກສານັ້ນ, ການສຶກສາສາທາຣະນະອັນເຫມາະສົມ (**FAPE**) ແລະ ຄັດເລືອກເອົາເດັກຂອງເຂົາເຈົ້າເຂົ້າໃນໂຮງຮຽນເອກະຊົນທີ່ມີການບໍລິການນັ້ນ, ການບໍລິການເຫລົ່ານັ້ນຕ້ອງມີໃຫ້ພາຍໃຕ້ ແຜນການສຶກສາສ່ວນບຸກຄົນ ຂອງການສຶກສາພິເສດ (**SEISP**).

ກົດຫມາຍຣັຖບານກາງມີທຶນຈຳກັດແກ່ສູນກາງສຶກສາທີ່ຈະໃຊ້ສຳຫລັບບໍລິການຊ່ວຍເຫລືອພວກນັກຮຽນຢູ່ໃນໂຮງຮຽນເອກະຊົນ ອັນເປັນສ່ວນແບ່ງອັນນຶ່ງຂອງກົດຫມາຍພິການສ່ວນບຸກຄົນຂອງຣັຖບານກາງ (**IDEA**).

### ການບໍລິການຊ່ວຍເຫລືອຕ່າງໆຂອງສູນກາງສຶກສາ

ການຊ່ວຍເຫລືອໂຄງການສຶກສາພິເສດຂອງສູນກາງສຶກສາ ສຳຫລັບພວກນັກຮຽນທີ່ພໍ່ແມ່ສົ່ງເຂົ້າໂຮງຮຽນເອກະຊົນທີ່ຈັດນຶ່ງໄວ້ນັ້ນ ມີດັ່ງຕໍ່ໄປນີ້:

- ແຈ້ງບອກພາວະການ ແລະ ປະເມີນຜົນ
- ໃຫ້ການຣິເລີ້ມສຳຣວດທົດສອບ.
- ປັບປຸງແຜນການສຶກສາສ່ວນບຸກຄົນ (**IEP**) ຂຶ້ນ.
- ປັບປຸງແຜນການ **SEISP** ຂຶ້ນ, ຖ້າວ່າເດັກຍັງຮຽນໃນໂຮງຮຽນເອກະຊົນຢູ່.
- ລາຍງານປະຈຳປີກ່ຽວກັບເງື່ອນໄຂການໄດ້ຮັບບໍລິການການສຶກສາພິເສດ.
- ທຳການປະເມີນຜົນໃຫມ່ອີກ ຢ່າງນ້ອຍໃນທຸກໆສາມປີ.
- ໃຫ້ຂ່າວ, ທາງອອກຕ່າງໆ, ແລະ ການອົບຮົມທີ່ເຫມາະສົມ ສຳຫລັບພໍ່ແມ່ ແລະ ພະນັກພະນັກງານໂຮງຮຽນເອກະຊົນ.
- ຂຽນປະກາດ ລະບຽບການຄວາມປອດພັຍຕ່າງໆ.

### ບໍລິການກ່ຽວກັບການປຶກສາແນະນຳ

ອີງຕາມນະໂຍບາຍສູນກາງສຶກສານັ້ນ, ພວກນັກຮຽນທີ່ຢູ່ພາຍໃຕ້ແຜນການ **EISP** ຈະໄດ້ຮັບການປຶກສາແນະນຳ ປີນຶ່ງສອງຄັ້ງ. ການປຶກສາແນະນຳນີ້ຮວມທັງ ໃຫ້ການແນະນຳຫົນທາງອອກຕ່າງໆແລະການເຂົ້າແຊກຊ່ອຍທີ່ເຫມາະສົມ ທີ່ຈະຊ່ອຍໃນການສົດສອບ ແລະ ການຮ່ຳຮຽນ.

## ຂໍ້ສລຸບ

- ❖ ການຊ່ວຍເຫລືອນັກຮຽນທີ່ພໍ່ແມ່ສົ່ງເຂົ້າໂຮງຮຽນເອກະຊົນ (**PPPSS**) ບໍລິການ ການປຶກສາແນະນຳແກ່ພວກນັກຮຽນພິການທີ່ເຂົ້າໃນໂຮງຮຽນເອກະຊົນທີ່ຈັດໄວ້.
- ❖ ປະຈຸບັນຫ້ອງການ **PPPSS** ໄດ້ບໍລິການນັກຮຽນປະມານ 200 ຄົນ ທີ່ໄດ້ເຂົ້າຮຽນໃນໂຮງຮຽນເອກະຊົນເຂດເມືອງແຊນດີເອໂກ ຫລາຍກວ່າ 75 ແຫ່ງ.
- ❖ ການບໍລິການໄດ້ໃຫ້ການປຶກສາແນະນຳແກ່ພວກນັກຮຽນໃນແຜນການສຶກສາສ່ວນບຸກຄົນ ຂອງການສຶກສາພິເສດ (**SEISP**) ນັ້ນມີໂຄງການສຶກສາພິເສດດັ່ງນີ້:
  - ຜູ້ຊ່ຽວຊານດ້ານການຊ່ວຍເຫລືອຕ່າງໆ
  - ດ້ານພາສາ ແລະ ການປາກເວົ້າ
  - ດ້ານການຫູຫນວກ ແລະ ບໍ່ໄດ້ຍິນດີ
  - ມີບັນຫາກ່ຽວກັບກະດູກ
  - ດ້ານການບໍ່ເຫັນຮຸ່ງ
- ❖ ເພື່ອຮູ້ກ່ຽວກັບການບໍລິການແກ່ພວກນັກຮຽນເຂົ້າຢູ່ໃນໂຮງຮຽນເອກະຊົນນັ້ນ, ຂໍໃຫ້ຕິດຕໍ່ຫາຜູ້ຊ່ຽວຊານຊ່ວຍເຫລືອ ການສຶກສາພິເສດໃນສູນກາງສຶກສາທີ່ເດັກເຂົ້າຢູ່, ຫລື ຕິດຕໍ່ຫາຜູ້ບໍລິການຊ່ວຍເຫລືອທີ່ຫ້ອງການ **PPPSS:**

ຜູ້ຊ່ຽວຊານຊອກຫາງຊ່ວຍເຫລືອ
(**Resources Specialist**) (858) 573−5977
ດ້ານພາສາ ແລະ ການປາກເວົ້າ
(**Speech/Language**) (858) 627−7510
ນັກຈິຕວິທຍາ
(**Psychologist**) (858) 627−7511
ຜູ້ຊ່ວຍເຫລືອເມື່ອບໍ່ມີເດັກພິການຫລາຍ
(**Low Incidence**) (858) 490−8451

*ອະພິບັນທະນາການຕໍ່າພິມຈາກມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: **Parentally Placed Private School Services (858) 573-5977**
**Media inquires: (619) 725-5578**

**http://www.sandi.net/depts/specialed/**

"ບໍລິການຊ່ວຍເຫລືອນັກຮຽນຫລາຍກວ່າ ,138,000 ຄົນ, ສູນກາງສຶກສາແຊນດີເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລີຟໍເນັຍ, ມີໂຮງຮຽນຫລາຍກວ່າ 200 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແຫນ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 18,800 ຄົນ.) ສູນກາງສຶກສາແຊນດີເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນຫນັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ, ແລະ ວິຊາເລກ. ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄນ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ."

ພາລະຫນ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດີເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສົດສອບ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.